# ຈາກປະຫວັດສາດເຖິງປັດຈຸບັນ, ມິດຕະພາບທີ່ໝັ້ນຍືນຍາວນານ

## ສຳພາດ ທ່ານ ສົມພອນ ສີຈະເລີນ ເອກອັກຄະລັດຖະທູດ ສປປ ລາວ ປະຈຳ ສປ ຈີນ



"ຍິນດີຕ້ອນຮັບ! ຢ່າເກງໃຈ, ໃຫ້ຄືກັນກັບມາຢາມພີ່ນ້ອງເດີ." ຕົ້ນລະດູໃບໄມ້ຫຼົ່ນຢູ່ນະຄອນຫຼວງປັກກິ່ງ, ຫຼັງຈາກຝົນຕົກຫ່າໜຶ່ງແລ້ວ, ກິ່ນຫອມດອກຈຳປາອ່ອນໆໄດ້ລອຍປິວໄປທົ່ວທິດໃນສະຖານທູດ ສປປ ລາວປະຈຳສປ ຈີນ. ຂະນະທີ່ນັກຂ່າວເຂົ້າໄປໃນຫ້ອງຮັບແຂກ, ໃບໜ້າຂອງທ່ານເອກອັກຄະລັດຖະທູດ ສົມພອນ ສີຈະເລີນ ເຕັມໄປດ້ວຍຮອຍຍິ້ມ ແລະ ທັກທາຍນຳນັກຂ່າວຢ່າງອົບອຸ່ນ.

ຕອນບ່າຍວັນນັ້ນ, ທ່ານ ສົມພອນ ສີຈະເລີນ ລູກຫຼານຂອງນັກປະຕິວັດລາວ, ນັກການທູດອາວຸໂສ ພ້ອມທັງເປັນພະຍານຕໍ່ສາຍພົວພັນມິດຕະພາບລາວ-ຈີນ ເຄິ່ງສະຕະວັດມານີ້ ໄດ້ເລົ່າເລື່ອງລາວທີ່ຜ່ານມາຕໍ່ນັກຂ່າວ, ເພິ່ນໄດ້ຍົກໃຫ້ເຫັນຄວາມຜູກພັນອັນເລິກເຊິ່ງລະຫວ່າງສອງປະເທດທີ່ໄດ້ຝັງຢັ່ງຮາກເລິກຢູ່ໃນປະຫວັດສາດ.

### ຄົນຈີນໄດ້ຕໍ່ສູ້ຄຽງບ່າຄຽງໄຫຼ່ກັບພວກເຮົາ, ເພື່ອປົກປ້ອງອຸດົມການ

ເມື່ອຍ້ອນເວລາໄປໃນອະດີດ, ທ່ານ ສົມພອນ ສີຈະເລີນ ກ່າວວ່າຈຸດຫັນປ່ຽນ ໃນຊີວິດຂອງເພິ່ນແມ່ນ "ໂຮງຮຽນ 67".

ໃນຊຸມປີ 1960 ສະຕະວັດຜ່ານມານີ້, ປະເທດລາວຕົກຢູ່ໃນໄລຍະອັນສຳຄັນຂອງສົງຄາມຕ້ານການຮຸກຮານຂອງຈັກກະພັດແບບໃໝ່ ເພື່ອກອບກູ້ປະເທດຊາດ. ເພື່ອຮັບປະກັນຄວາມປອດໄພ ແລະ ການສຶກສາຂອງລູກຫຼານນັກປະຕິວັດ, ການນຳທັງສອງຝ່າຍລາວ ແລະ ຈີນ ໄດ້ຕົກລົງເປັນເອກະພາບກັນສ້າງຕັ້ງ "ໂຮງຮຽນ 67" ຢູ່ນະຄອນນານໜິງ ເຂດປົກຄອງຕົນເອງເຜົ່າຈ້ວງ ກວາງຊີ ໃນປີ 1967, ຊື່ເຕັມແມ່ນໂຮງຮຽນນ້ອງນ້ອຍລາວ.

"ຢູ່ທີ່ນັ້ນ, ພວກເຮົາໄດ້ຮັບການສຶກສາຮອບດ້ານ ແລະ ສາຍຕາ ກໍໄດ້ຮັບການເປີດກວ້າງ." ທ່ານ ສົມພອນ ສີຈະເລີນ ຈື່ຈຳທຸກເລື່ອງໃຫຍ່ນ້ອຍທີ່ທ່ານໄດ້ໃຊ້ເວລາກັບ ຄູອາຈານ ແລະ ນັກຮຽນຈີນ. ທ່ານກ່າວວ່າທຸກສິ່ງທຸກຢ່າງກໍສ່ອງແສງໃຫ້ເຫັນເຖິງນ້ຳໃຈອັນຈິງໃຈຂອງປະຊາຊົນຈີນ ແລະ ການສະໜັບສະໜູນທີ່ແທ້ຈິງຂອງປະເທດຈີນທີ່ມີຕໍ່ປະຊາຊົນລາວ.

ທ່ານກ່າວເຖິງສະເພາະວ່າ, ການນຳຂັ້ນສູງຂອງລາວຫຼາຍທ່ານ ເຊັ່ນ ທ່ານ ສອນໄຊ ສີພັນດອນ ນາຍົກລັດຖະມົນຕີແຫ່ງ ສປປ ລາວ ແລະ ປະທານສະພາແຫ່ງຊາດລາວ ທ່ານ ໄຊສົມພອນ ພົມວິຫານ ເປັນຕົ້ນ ກໍເປັນນັກຮຽນຂອງ "ໂຮງຮຽນ 67". ທ່ານ ທອງລຸນ ສີສຸລິດ ເລຂາທິການໃຫຍ່ຄະນະບໍລິຫານງານສູນກາງພັກ, ປະທານປະເທດແຫ່ງ ສປປ ລາວ ໃນເວລານັ້ນ ທັງເປັນອາຈານສອນ ທັງຍັງໄດ້ນຳພານັກຮຽນໄປສຶກສາຢູ່ຈີນ.

ທ່ານ ສົມພອນ ສີຈະເລີນ ເວົ້າດ້ວຍຄວາມຮູ້ສຶກອັນເລິກເຊິ່ງວ່າ: "ຖ້າບໍ່ມີຄູອາຈານເຫຼົ່ານີ້, ກໍຈະບໍ່ມີຂ້າພະເຈົ້າຄືຊູ່ມື້ນີ້."

ໃນຂະນະທີ່ທວນຄືນສາຍພົວພັນມິດຕະພາບອັນເລິກເຊິ່ງລະຫວ່າງສອງປະເທດ, ທ່ານ ສົມພອນ ສີຈະເລີນ ໄດ້ກ່າວເຖິງສະຖານທີ່ແຫ່ງໜຶ່ງທີ່ມີຄວາມໝາຍ ແຕ່ມີຄົນຮູ້ໜ້ອຍ ຄື: "ຖ້ຳຈີນ" ຢູ່ເມືອງວຽງໄຊ, ແຂວງຫົວພັນ, ພາກເໜືອຂອງລາວ.

ມັນເປັນຖ້ຳທຳມະຊາດໃຫຍ່ແຫ່ງໜຶ່ງ, ໃກ້ກັບສູນບັນຊາການຂອງການນຳພັກປະຊາຊົນປະຕິວັດລາວໃນສະໄໝສົງຄາມຕໍ່ຕ້ານການໂຈມຕີດ້ວຍລະເບີດຂະໜາດໃຫຍ່ ຂອງກອງທັບສະຫະລັດອາເມຣິກາ. ທີ່ນີ້, ຍັງເປັນບ່ອນຫຼົບໄພ ແລະ ປະຕິບັດງານຂອງພະນັກງານນັກຊ່ຽວຊານຈີນທີ່ໄປຊ່ວຍເຫຼືອການປະຕິວັດລາວ.

"ທຸກຄົນໃຊ້ຊີວິດຮ່ວມກັນໃນຖ້ຳ, ປະຊຸມນຳກັນ ແລະ ວາງແຜນຍຸດທະສາດຮ່ວມກັນ, ຄົນຈີນບໍ່ແມ່ນຢືນຢູ່ທາງນອກຫ່າງໄກໃຫ້ການຊ່ວຍເຫຼືອ ຫາກແມ່ນຕໍ່ສູ້ຄຽງບ່າຄຽງໄຫຼ່ກັບພວກເຮົາ." ທ່ານ ສົມພອນ ສີຈະເລີນ ກ່າວວ່າ, ໃນເວລາທີ່ອັນຕະລາຍທີ່ສຸດ, ນັກຊ່ຽວຊານຈີນ ແລະ ນັກປະຕິວັດລາວໄດ້ຢູ່ນຳກັນທຸກມື້ ຮ່ວມທຸກຮ່ວມສຸກ, ໄດ້ທຸ່ມເທສະຕິປັນຍາ ແລະ ເລືອດເນື້ອ ເພື່ອປົກປ້ອງອຸດົມການຮ່ວມກັນ.

ເວລາຜ່ານໄປຢ່າງງຽບໆ, ແຕ່ພູຜາ ແລະ ແມ່ນ້ຳເປັນສັກຂີພິຍານ. ແຕ່ປີ 1962 ຫາປີ 1978 ຕາມການຮຽກຮ້ອງຂອງປະເທດລາວ, ຈີນໄດ້ສົ່ງກອງທັບວິສະວະກຳ ແລະ ທະຫານປ້ອງກັນທາງອາກາດ 110.000 ຄົນໄປລາວ. ເຂົາເຈົ້າໄດ້ສ້າງຖະໜົນຫົນທາງ, ຕິດຕັ້ງສາຍຄົມມະນາຄົມການສື່ສານ ແລະ ປະຕິບັດພາລະກິດປ້ອງກັນທາງອາກາດ. ຫຼາຍຄົນໄດ້ເສຍສະຫຼະຊີວິດໃນວຽກງານນີ້, ນອນຫຼັບຕະຫຼອດໄປຢູ່ໃນດິນລາວ. ມາຮອດທຸກວັນນີ້, ຢູ່ປະເທດລາວ ຍັງມີສວນສຸສານນັກຮົບຈີນທີ່ເສຍສະຫຼະຊີວິດຫຼາຍແຫ່ງ ເຊິ່ງໄດ້ເປັນພະຍານເຖິງປະຫວັດສາດທີ່ຂຽນໄວ້ດ້ວຍເລືອດເນື້ອ.

"ປະຊາຊົນລາວຈະບໍ່ມີວັນລືມຜູ້ທີ່ຢູ່ຄຽງຂ້າງພວກເຮົາ ໃນເວລາທີ່ຫຍຸ້ງຍາກທີ່ສຸດ." ສຽງອັນໜັກແໜ້ນ ແລະ ມີພະລັງຂອງທ່ານ ສົມພອນ ສີຈະເລີນ ດັງຂຶ້ນໃນຫ້ອງຮັບແຂກທີ່ງຽບສະຫງົບ.

### ການຮ່ວມມືລາວ-ຈີນ ກໍຄືລາວ-ຢຸນນານ ເກີດໝໍ່ອອກຈາວ ແລະ ສາຍພົວພັນມິດຕະພາບໜັ້ງຕຶງຢູ່ສະເໝີ

ໃນຖານະເປັນແຂວງດຽວຂອງຈີນທີ່ມີຊາຍແດນຕິດກັບລາວ, ແຂວງຢຸນນານມີບົດບາດເປັນ "ຊ່ອງທາງແຫ່ງທຳອິດ" ໃນການຮ່ວມມື ລາວ-ຈີນ.

ທ່ານ ສົມພອນ ສີຈະເລີນ ຊີ້ອອກວ່າ, ແຂວງຢຸນນານບໍ່ພຽງແຕ່ເປັນ "ບ້ານໃກ້ເຮືອນຄຽງ" ໃນທີ່ຕັ້ງພູມສາດເທົ່ານັ້ນ, ຫາກຍັງເປັນຜູ້ບຸກເບີກໃນການແລກປ່ຽນດ້ານວັດທະນະທຳ ແລະ ການຮ່ວມມືທີ່ເຮັດແທ້ທຳຈິງ. ທ່ານໄດ້ຍົກຕົວຢ່າງວ່າ, ວາລະສານ ຈຳປາ ສະບັບສອງພາສາລາວ-ຈີນ ທີ່ດຳເນີນການດ້ວຍແຂວງຢຸນນານໄດ້ກາຍເປັນປ່ອງຢ້ຽມອັນສຳຄັນໃນການເພີ່ມທະວີຄວາມເຂົ້າໃຈລະຫວ່າງປະຊາຊົນສອງປະເທດ. ເນື້ອໃນຂອງວາລະສານດັ່ງກ່າວແມ່ນໃກ້ຊິດກັບຊີວິດຕົວຈິງ, ເຊິ່ງໄດ້ແນະນຳບົດຮຽນການພັດທະນາຂອງຈີນ ທັງຍັງໄດ້ສະແດງໃຫ້ເຫັນເຖິງວັດທະນະທຳ ແລະ ການດຳລົງຊີວິດຂອງລາວ, ໄດ້ເພີ່ມທະວີຄວາມເຂົ້າໃຈເຊິ່ງກັນ ແລະ ກັນ ລະຫວ່າງປະຊາຊົນ. "ນີ້ບໍ່ແມ່ນການໂຄສະນາຝ່າຍດຽວ, ແຕ່ເປັນການສົນທະນາກັນທັງສອງຝ່າຍ."

ປັດຈຸບັນ, ໝາກຜົນທີ່ພົ້ນເດັ່ນທີ່ສຸດຂອງການຮ່ວມມືລະຫວ່າງສອງຝ່າຍແມ່ນເສັ້ນທາງລົດໄຟ ລາວ-ຈີນ. ເສັ້ນທາງລົດໄຟທັນສະໄໝທີ່ມີຄວາມຍາວ 1.035 ກິໂລແມັດສາຍນີ້, ນັບແຕ່ເປີດການນຳໃຊ້ເປັນຕົ້ນມາ, ໄດ້ຊຸກຍູ້ການພັດທະນາເສດຖະກິດຂອງຕົວເມືອງທີ່ລຽບຕາມເສັ້ນທາງ. ທ່ານ ສົມພອນ ສີຈະເລີນ ກ່າວວ່າ: ຫວ່າງມໍ່ໆມານີ້, ທັງສອງຝ່າຍ ລາວ-ຈີນ ໄດ້ລົງນາມສັນຍາລະຫວ່າງ ລັດຖະບານວ່າດ້ວຍ "One stop service" ຂອງທາງລົດໄຟ ລາວ-ຈີນ, ໃນອະນາຄົດຜູ້ໂດຍສານຈະເຂົ້າ-ອອກຜ່ານດ່ານຊາຍແດນ ພຽງແຕ່ຕ້ອງຂຶ້ນ-ລົງລົດໄຟເທື່ອດຽວ, ດຳເນີນການ "ລຽນແຖວຄັ້ງດຽວ ຜ່ານ 4 ດ່ານ" ແລະ ໄລຍະເວລາການຜ່ານດ່ານທັງໝົດຄາດວ່າຈະຫຼຸດລົງຢ່າງຫຼວງຫຼາຍ ບົນພື້ນຖານທີ່ມີຢູ່ໃນປະມານ 2 ຊົ່ວໂມງນັ້ນ. "ນີ້ບໍ່ພຽງແຕ່ເປັນຜົນສຳເລັດທີ່ຄົ້ນຄວ້າໄດ້ອັນສຳຄັນໃນການອຳນວຍຄວາມສະດວກໃນການຜ່ານດ່ານຊາຍແດນທາງລົດໄຟລາວ-ຈີນ ເທົ່ານັ້ນ, ໃນອະນາຄົດບົດຮຽນດັ່ງກ່າວຍັງຈະຮຽນແບບ ແລະ ສົ່ງເສີມໄປໃຊ້ໃນຕາໜ່າງເສັ້ນທາງລົດໄຟຂ້າມທະວີບອາຊີ (Trans-Asian Railway) ໄດ້ອີກ."

ປະເທດລາວພວມຕັ້ງໜ້າຊຸກຍູ້ຂໍ້ລິເລີ່ມ "ໜຶ່ງແລວ ໜຶ່ງເສັ້ນທາງ", ເພື່ອຕອບສະໜອງຂໍ້ລິເລີ່ມວ່າດ້ວຍການພັດທະນາທົ່ວໂລກ, ຂໍ້ລິເລີ່ມວ່າດ້ວຍຄວາມໝັ້ນຄົງທົ່ວໂລກ, ຂໍ້ລິເລີ່ມວ່າດ້ວຍອາລິຍະທຳທົ່ວໂລກ ແລະ ຂໍ້ລິເລີ່ມວ່າດ້ວຍການປົກຄອງທົ່ວໂລກ ທີ່ທ່ານປະທານສີຈິ້ນຜິງສະເໜີອອກມາ. ທ່ານ ສົມພອນ ສີຈະເລີນ ກ່າວວ່າ, ເຊື່ອວ່າລັດທີຫຼາຍຝ່າຍທີ່ແທ້ຈິງ ບໍ່ພຽງແຕ່ເປັນຄຳຂວັນເທົ່ານັ້ນ, ຫາກເປັນການກະທຳຕົວຈິງ ເຊັ່ນ ການສ້າງທາງລົດໄຟ, ສ້າງໂຮງຮຽນ ແລະ ການຕໍ່ສູ້ຕ້ານພະຍຸລົມຝົນຮ່ວມກັນ.

ຂະນະທີ່ການສຳພາດຄັ້ງນີ້ໃກ້ຈະສິ້ນສຸດລົງ, ທ່ານ ສົມພອນ ສີຈະເລີນ ໄດ້ຫຼຽວອອກໄປທາງນອກປ່ອງຢ້ຽມ ແລະ ກ່າວວ່າ: "ມິດຕະພາບ ລະຫວ່າງລາວ-ຈີນ ໄດ້ຮັບການສ້າງຕັ້ງຂຶ້ນ ດ້ວຍການເສຍສະຫຼະ, ຄວາມໄວ້ເນື້ອເຊື່ອໃຈ,ຈັບມືກັນກ້າວເດີນໄປໜ້າ." ທ່ານຫວັງວ່າ,ໄວໜຸ່ມທັງສອງປະເທດຈະເຂົ້າໃຈຢ່າງແທ້ຈິງຕໍ່ເລື່ອງລາວຂອງ "ໂຮງຮຽນ 67",ຍ່າງເຂົ້າໄປສູ່ "ຖ້ຳຈີນ" ແລະ ນັ່ງລົດໄຟ ລາວ-ຈີນ ເພື່ອສຳຜັດກັບນ້ຳໜັກແຫ່ງຄວາມຜູກພັນນີ້, ເລົ່າຂານຄວາມຊົງຈຳອັນແທ້ຈິງ ແລະ ມິດຕະພາບທີ່ຈິງໃຈນີ້ ຈາກຄົນຮຸ່ນນີ້ສູ່ຮຸ່ນໜ້າຕໍ່ໆກັນ.

ບົດໂດຍ: ວີມິນ (Yang Chunmei), Han Chengyuan

(ສະໜອງຂໍ້ມູນໂດຍ: ສູນການສື່ສານສາກົນພາກພື້ນອາຊີໃຕ້-ອາຊີຕາເວັນອອກສ່ຽງໃຕ້ແຂວງຢຸນນານ)

ynzhanba@163.com
laos.yunnangateway.com

